ສາທາລະນະລັດປະຊາທິປະໄຕປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

=====000=====

ກະຊວງສາທາລະນະສຸກ

ກອງເລຂາຄະນະກຳມະການປະສານງານ

ກອງທຶນໂລກຕ້ານເອດ, ວັນນະໂລກ ແລະ ໄຂ້ຍຸງ

ສປປ ລາວ

# ບົດບັນທຶກກອງປະຊຸມ
# ຄະນະກຳມະການປະສານງານກອງທຶນໂລກ

ກອງປະຊຸມຄັ້ງນີ້ ໄດ້ຈັດຂຶ້ນເປັນຄັ້ງທີ 02 ຂອງສົກປີ 2019-2020 ໂດຍການເປັນປະທານຂອງ ທ່ານ ຮສ. ດຣ. ພູທອນ ເມືອງປາກ, ຮອງລັດຖະມົນຕີກະຊວງສາທາລະນະສຸກ ທັງເປັນປະທານຄະນະກຳມະການປະສານງານກອງທຶນໂລກ.

**ວັນເວລາ:** ວັນພະຫັດ, ທີ 06 ມີນາ 2020, ເວລາ 13:30 ເຖິງ 17:00.

**ສະຖານທີ່:** ຫ້ອງປະຊຸມຊັ້ນ 3 ກະຊວງສາທາລະນະສຸກ.

**ຜູ້ເຂົ້າຮ່ວມ:** ສະມາຊິກສົມບູນ ແລະ ສຳຮອງຂອງ CCM ຈຳນວນ 20 ທ່ານ (ມີສິດອອກສຽງໄດ້ 19 ທ່ານ), ພາກສ່ວນອື່ນໆ ຈຳນວນ 21 ທ່ານ, ກອງເລຂາ CCM ຈຳນວນ 03 ທ່ານ ລວມທັງໝົດ 44 ທ່ານ.

## I. ວາລະກອງປະຊຸມ:

1. ທົບທວນແລະພິຈາລະນາເພື່ອຮັບຮອງເອົາຮ່າງບົດສະເໜີຂໍທຶນຂອງໂຄງການ RAI ຂອງ ສປປ ລາວ ແລະ ເອກະສານທີ່ກ່ຽວຂ້ອງ ຕາມຮອບວຽນອະນຸມັດທຶນຂອງກອງທຶນໂລກ ປີ 2020-2022;
2. ສະເໜີຮ່າງບົດສະເໜີຂໍທຶນຂອງໂຄງການຮ່ວມວັນນະໂລກ ແລະ ເຮສໄອວີ ແລະ ເອກະສານທີ່ກ່ຽວຂ້ອງ ຕາມຮອບວຽນອະນຸມັດທຶນຂອງກອງທຶນໂລກ ປີ 2020-2022;
3. ບັນຫາອື່ນໆ.

## II. ສະຫຼຸບສັງລວມບັນດາຈຸດສຳຄັນຂອງກອງປະຊຸມ:

ພາຍຫຼັງທີ່ໄດ້ຮັບຟັງການສະເໜີ ຮ່າງບົດສະເໜີຂໍທຶນຂອງໂຄງການ RAI ຂອງ ສປປ ລາວ ໃນສົກປີ 2020-2022 ຈາກຜູ້ຕາງໜ້າສູນໄຂ້ຍຸງ, ແມ່ກາຝາກ ແລະ ແມງໄມ້ (CMPE) ແລະ ໄດ້ຮັບຟັງການສະເໜີ ຮ່າງບົດສະເໜີຂໍທຶນຂອງໂຄງການຮ່ວມວັນນະໂລກ ແລະ ເຮສໄອວີ ໃນສົກປີ ປີ 2020-2022 ຈາກຜູ້ຕາງໜ້າສູນຕ້ານເອດ ແລະ ພຕພ (CHAS) ແລະ ສູນຄວບຄຸມວັນນະໂລກ; ໂດຍຜ່ານການຄົ້ນຄ້ວາປຶກສາຫາລືກັບຄະນະກຳມະການປະສານງານກອງທຶນໂລກ (CCM) ແລະ ຄູ່ຮ່ວມງານ, ກອງປະຊຸມໄດ້ຕົກລົງເຫັນດີເປັນເອກະພາບກັນສະຫຼຸບປະເດັນສຳຄັນ ແລະ ໃຫ້ຄຳແນະນຳດັ່ງລຸ່ມນີ້:

1. ຄະນະກຳມະການປະສານງານກອງທຶນໂລກ ໄດ້ຮັບຮອງເອົາຮ່າງບົດສະເໜີຂໍທຶນຂອງໂຄງການ RAI ຂອງ ສປປ ລາວ ແລະ ເອກະສານພື້ນຖານທີ່ກ່ຽວຂ້ອງຕາມຮອບວຽນອະນຸມັດທຶນຂອງກອງທຶນໂລກ ປີ 2020-2022 ແລະ ໄດ້ສະເໜີໃຫ້ຜູ້ຮັບຜິດຊອບຂອງສູນໄຂ້ຍຸງ, ແມ່ກາຝາກ ແລະ ແມງໄມ້ ເພື່ອປັບປຸງບັນຫາທີ່ຍັງບໍ່ທັນຈະແຈ້ງໃຫ້ສຳເລັດ ແລ້ວສົ່ງໃຫ້ກອງເລຂາ CCM ກ່ອນວັນທີ 10 ເດືອນມີນາ ເພື່ອສົ່ງຕໍ່ໄປໃຫ້ຄະນະກຳມະການປະສານງານກອງທຶນໂລກ ເພື່ອທົບທວນ ແລະ ປະກອບຄຳເຫັນເພີ່ມເຕີມໃນບົດສະເໜີດັ່ງກ່າວ. ຫຼັງຈາກນັ້ນ ແມ່ນໃຫ້ກອງເລຂາ CCM ກະກຽມແບບຟອມການເຊັນຮັບຮອງ ເພື່ອໃຫ້ຄະນະກຳມະການປະສານງານກອງທຶນໂລກທັງໝົດໄດ້ເຊັນໃນແບບຟອມດັ່ງກ່າວນັ້ນໃຫ້ສຳເລັດ.
2. ຄະນະກຳມະການປະສານງານກອງທຶນໂລກ ໄດ້ຮັບຮອງເອົາຮ່າງບົດສະເໜີຂໍທຶນຂອງໂຄງການຮ່ວມວັນນະໂລກ ແລະ ເຮສໄອວີ ແລະ ເອກະສານຕ່າງໆທີ່ກ່ຽວຂ້ອງຕາມຮອບວຽນອະນຸມັດທຶນຂອງກອງທຶນໂລກ ປີ 2020-2022 ແລະ ໄດ້ສະເໜີໃຫ້ຜູ້ຮັບຜິດຊອບຂອງສູນຕ້ານເອດ ແລະ ພຕພ (CHAS) ແລະ ສູນຄວບຄຸມວັນນະໂລກ (NTC) ເພື່ອປັບປຸງບັນຫາທີ່ຍັງບໍ່ທັນຈະແຈ້ງໃຫ້ສຳເລັດໂດຍອີງໃສ່ຄຳເຫັນຈາກກອງປະຊຸມ ແລະ ໃຫ້ປະສານງານກັບກອງເລຂາ CCM ກ່ຽວກັບວັນທີທີ່ຈະສົ່ງໄປໃຫ້ຄະນະກຳມະການປະສານງານກອງທຶນໂລກ ເພື່ອທົບທວນ ແລະ ປະກອບຄຳເຫັນເພີ່ມເຕີມໃນບົດສະເໜີດັ່ງກ່າວ. ຫຼັງຈາກນັ້ນ ແມ່ນໃຫ້ກອງເລຂາ CCM ກະກຽມແບບຟອມການເຊັນຮັບຮອງ ເພື່ອໃຫ້ຄະນະກຳມະການປະສານງານກອງທຶນໂລກ ທັງໝົດໄດ້ເຊັນໃນແບບຟອມດັ່ງກ່າວນັ້ນໃຫ້ສຳເລັດ.
3. ໃຫ້ກອງເລຂາ CCM ສືບຕໍ່ປະສານງານກັບ UNOPS, PR ແລະ ແຜນງານແຫ່ງຊາດ ເພື່ອປຶກສາຫາລືກ່ຽວກັບການຄັດເລືອກຜູ້ຮັບທຶນຍ່ອຍ (SR) ສຳລັບໂຄງການ RAI3E ໂດຍການປະຕິບັດໃຫ້ສອດຄ່ອງກັບເງື່ອນໄຂແບບໂປ່ງໃສ ຕາມທີ່ໄດ້ປຶກສາຫາລືກັນເພື່ອໃຫ້ສຳເລັດກ່ອນເດືອນເມສາ.
4. ພ້ອມດຽວກັນນີ້, ໃຫ້ກອງເລຂາ CCM ສືບຕໍ່ປະສານງານກັບທີມງານ DPC ແລະ WB ກ່ຽວກັບການຮ່າງໂຄງປະກອບຂອງການຄຸ້ມຄອງໂຄງການຮ່ວມລະຫວ່າງກອງທຶນໂລກ ກັບ HANSA ທີ່ຍັງບໍ່ທັນໄດ້ສຳເລັດ.

ກອງປະຊຸມຄັ້ງນີ້ ໄດ້ສຳເລັດໃນເວລາ 17:00 ຂອງວັນທີ 06 ມີນາ 2020.

ນະຄອນຫຼວງວຽງຈັນ, ວັນທີ 19 ມີນາ 2020

**ປະທານກອງປະຊຸມ**

ທ່ານ ຮສ. ດຣ. ພູທອນ ເມືອງປາກ
ຮອງລັດຖະມົນຕີກະຊວງສາທາລະນະສຸກ,
ປະທານຄະນະກຳມະການປະສານງານກອງທຶນໂລກ

**ຜູ້ສັງລວມເນື້ອໃນກອງປະຊຸມ**

ທ່ານ ບຸດສາລີ ລັດຕະນະ
ຜູ້ປະສານງານ ແລະ ການເງິນ
ກອງເລຂາຄະນະກຳມະການປະສານງານກອງທຶນໂລກ